# ມະຕິ
# ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ສະໄໝທີ XI

ກອງປະຊຸມຄົບຄະນະ ຄັ້ງທີ 9 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດຳເນີນລະຫວ່າງວັນທີ 28 ຕຸລາ ຫາ 06 ພະຈິກ 2024 ທີ່ຫ້ອງວ່າການສູນກາງພັກ ພາຍໃຕ້ການເປັນປະທານ ຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ .

ກອງປະຊຸມ ໄດ້ສຸມໃສ່ຍົກສູງຄວາມຮັບຜິດຊອບການເມືອງ ໃນການຄົ້ນຄວ້າ, ປະກອບຄວາມເຫັນ ແລະ ເປັນເອກະພາບ ໃຫ້ທິດຊີ້ນຳ ຕໍ່ບັນດາເນື້ອໃນ ທີ່ນຳມາປຶກສາຫາລືກັນ ດັ່ງນີ້:

**1. ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ປະຈຳປີ 2024 ແລະ ທິດທາງ, ແຜນການ ປີ 2025 ຕິດພັນກັບການຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.**

ກອງປະຊຸມ ໄດ້ຕີລາຄາສູງຕໍ່ບັນດາຜົນສຳເລັດພື້ນຖານ ໃນການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນຕ່າງໆ ຂອງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2024 ເຊິ່ງຄາດຄະເນວ່າໝົດປີ ອັດຕາການເຕີບໂຕ ຂອງ GDP ຈະບັນລຸໄດ້ 4,6%; ການຈັດເກັບລາຍຮັບບັນລຸໄດ້ຕາມແຜນການ, ຫຼາຍທ້ອງຖິ່ນ ປະຕິບັດໄດ້ເກີນແຜນ; ການຄຸ້ມຄອງປະລິມານເງິນ M2, ອັດຕາແລກປ່ຽນ ໄດ້ທັນເປັນທັນສະໄໝ, ເປັນລະບົບກວ່າເກົ່າ ແລະ ຢູ່ໃນລະດັບທີ່ຄວບຄຸມໄດ້; ການຜະລິດພາຍໃນ ມີຫຼາຍດ້ານເພີ່ມຂຶ້ນ ເວົ້າລວມແລ້ວ ຫຼາຍມາດຕະການດ້ານເສດຖະກິດ-ສັງຄົມ ທີ່ວາງອອກ ໄດ້ຖືກຈັດຕັ້ງປະຕິບັດ ມີຜົນສຳເລັດເປັນສ່ວນໃຫຍ່, ເສດຖະກິດມະຫາພາກ ສືບຕໍ່ມີສະຖຽນລະພາບ ແລະ ຂະຫຍາຍຕົວຕໍ່ເນື່ອງ.

ກອງປະຊຸມ ໄດ້ຍົກໃຫ້ເຫັນຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຕ້ອງໄດ້ສືບຕໍ່ບຸກບືນສູ້ຊົນແກ້ໄຂ ໂດຍສະເພາະ ສະພາບຂາດຄວາມເດັດຂາດ, ເຂັ້ມງວດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ບົດບາດການຄຸ້ມຄອງມະຫາພາກ ທີ່ບໍ່ທັນແຂງແຮງ; ລະບຽບການ, ກົນໄກ, ພື້ນຖານໂຄງລ່າງ ທີ່ເປັນຂອດອັດຕັນການຜະລິດ-ທຸລະກິດ ແລະ ການລົງທຶນ ບໍ່ໄດ້ຮັບການແກ້ໄຂຂາດຕົວ; ຄວາມຮັບຜິດຊອບການເມືອງ ຂອງພະນັກງານຈຳນວນໜຶ່ງ ບໍ່ທັນສູງ.

ກອງປະຊຸມ ໄດ້ເປັນເອກະພາບໃຫ້ທິດຊີ້ນຳ ຕໍ່ວຽກງານຈຸດສຸມ 3 ເດືອນທ້າຍປີ 2024 ແລະ ທິດທາງ, ແຜນການ ປີ 2025 ຂອງລັດຖະບານ ດັ່ງນີ້:

(1) ແຜນປີ 2025 ຕ້ອງຖືເປັນແຜນ "ບຸກບືນສູ້ຊົນສູງສຸດ", ເດັດດ່ຽວແກ້ໄຂອຸປະສັກ, ສິ່ງອັດຕັນ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການພັດທະນາ, ການລົງທຶນ, ການຜະລິດ-ທຸລະກິດ ເພື່ອເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງໝັ້ນທ່ຽງ; ສ້າງບັນຍາກາດ, ຂະບວນການຟົດຟື້ນ ໃນໄລຍະມ້ວນທ້າຍແຫ່ງການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ດ້ວຍຜົນສຳເລັດອັນຈົບງາມ.

- ສົມທົບແຜນການສ້າງເສດຖະກິດຕາມຂະແໜງການ ແລະ ເຂດແຄວ້ນ ໃຫ້ສົມສ່ວນ, ກົມກຽວ ແລະ ຖືກທິດ; ຍົກລະດັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢ່າງມີຈຸດສຸມ;

- ຄຸ້ມຄອງໂຄງການພັດທະນາຈັບພະຍາກອນທຳມະຊາດ ໃຫ້ຖືກລະບຽບກົດໝາຍ, ເຂັ້ມງວດ, ມີຈຸດສຸມ, ມີປະສິດທິຜົນ ແລະ ຍືນຍົງ;

- ຄົ້ນຄວ້ານະໂຍບາຍ ດ້ານການເງິນ-ເງິນຕາ ທີ່ມີລັກສະນະເປັນເຈົ້າຕົນເອງ ແລະ ບໍ່ສ້າງໜີ້ສິນເພີ່ມ, ປັບປຸງກົນໄກ, ຂັ້ນຕອນ ແລະ ຊຸກຍູ້, ສົ່ງເສີມ, ການເຂົ້າເຖິງແຫຼ່ງທຶນ ເພື່ອການຜະລິດໃຫ້ສະດວກຂຶ້ນ.

- ແຜນງົບປະມານລາຍຈ່າຍ ປີ 2025 ຕ້ອງຄຳນຶງ ແລະ ຕອບສະໜອງຄວາມຈຳເປັນໜ້າທີ່ການເມືອງ-ວຽກຈຸດສຸມຂອງພັກ-ລັດ, ສະພາບຄວາມເປັນຈິງ ຂອງປະເທດຊາດ ບົນຈິດໃຈປະຢັດ ແລະ ຮັບປະກັນໃຫ້ມີປະສິດທິຜົນສູງ ໂດຍແນໃສ່ຂົງເຂດບຸລິມະສິດ ໃນການລົງທຶນຂອງລັດ; ການເພີ່ມເງິນເດືອນ, ແກ້ໄຂໜີ້ສິນ, ການແກ້ໄຂ-ຟື້ນຟູຜົນກະທົບຈາກໄພພິບັດ, ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ແລະ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.

(2) ມອບໃຫ້ລັດຖະບານ ສືບຕໍ່ຄົ້ນຄວ້າ ການກຳນົດ 9 ທິດທາງລວມ ແລະ ວຽກງານຈຸດສຸມ ຂອງລັດຖະບານ ໂດຍສະເພາະ ຄາດໝາຍສູ້ຊົນ GDP ໃຫ້ຂະຫຍາຍຕົວເພີ່ມຂຶ້ນ 4,8% ຂຶ້ນໄປ ເພື່ອສະເໜີຕໍ່ສະພາແຫ່ງຊາດ, ບົນພື້ນຖານຄວາມອາດສາມາດຕົວຈິງ.

(3) ປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດ ແລະ ການລົງທຶນ, ກົນໄກ, ລະບຽບການ ແລະ ແກ້ໄຂຂອດອັດຕັນຖ່ວງດຶງ ໃຫ້ເຖິງຖອງ; ຮັບປະກັນແກ້ໄຂບັນຫາການສະໜອງໄຟຟ້າເຂົ້າໃນໂຄງການຕ່າງໆຢູ່ພາຍໃນ ໃຫ້ໄດ້ຢ່າງພຽງພໍ; ເບິ່ງຄືນການແບ່ງຂັ້ນຄຸ້ມຄອງ, ການມອບຄວາມຮັບຜິດຊອບ ໃຫ້ທ້ອງຖິ່ນ ຕ້ອງຮັບປະກັນປະສິດທິພາບ ແລະ ວ່ອງໄວ.

(4) ສືບຕໍ່ປະຕິຮູບລັດວິສາຫະກິດ ຢ່າງຈິງຈັງ ແລະ ເປັນລະບົບ ເພື່ອເຮັດໃຫ້ບັນດາລັດວິສາຫະກິດ ເຄື່ອນໄຫວດຳເນີນທຸລະກິດ ຢ່າງມີປະສິດທິຜົນ, ນຳໃຊ້ຊັບພະຍາກອນຂອງຊາດຢ່າງຄຸ້ມຄ່າ, ສາມາດເຮັດບົດບາດເປັນເຈົ້າພາທາງ ໃນລະບົບເສດຖະກິດແຫ່ງຊາດ ແລະ ສາມາດແຂ່ງຂັນກັບສາກົນ.

(5) ສືບຕໍ່ຊຸກຍູ້ການຜະລິດພາຍໃນ ໃຫ້ເຂັ້ມແຂງ, ຈຳກັດການນຳເຂົ້າສິນຄ້າທີ່ເຮົາຜະລິດໄດ້ຢູ່ພາຍໃນ, ພ້ອມທັງຊຸກຍູ້ສົ່ງເສີມ SME ແລະ ການຜະລິດສິນຄ້າເພື່ອສົ່ງອອກ ໃຫ້ໄດ້ມາດຕະຖານ, ປະລິມານ ແລະ ຄຸນນະພາບ; ປຸກລະດົມສັງຄົມ ຊົມໃຊ້ສິນຄ້າ, ຜະລິດຕະພັນພາຍໃນ ໃຫ້ຫຼາຍຂຶ້ນ; ແກ້ໄຂການຄ້ານອກລະບົບ; ສືບຕໍ່ເຈລະຈາກັບຕ່າງປະເທດ ກ່ຽວກັບການສົ່ງອອກສິນຄ້າທີ່ເຮົາຜະລິດໄດ້; ກຳນົດໂຄງສ້າງລາຄາສິນຄ້າທີ່ກະທົບໄວ ໃຫ້ເໝາະສົມບໍ່ໃຫ້ເກີດມີການເອົາປຽບ ແລະ ສວຍໂອກາດ; ຍູ້ແຮງການສ້າງໂຮງງານປຸງແຕ່ງແຮ່ທາດ ເພື່ອສົ່ງອອກ ແລະ ໂຮງງານຜະລິດປັດໃຈການຜະລິດຕ່າງໆ.

(6) ດ້ານການເງິນ, ປັບປຸງໂຄງສ້າງງົບປະມານແຫ່ງລັດ ໃຫ້ຮັບປະກັນພື້ນຖານລະບົບຄັງເງິນແຫ່ງຊາດ, ເປັນເຈົ້າຕົນເອງ, ອັດຊ່ອງວ່າງການຮົ່ວໄຫຼງົບປະມານ ໂດຍຍູ້ແຮງການຫັນເປັນທັນສະໄໝ, ການສ້າງເສດຖະກິດດິຈິຕອນ; ພິຈາລະນາການໃຫ້ນະໂຍບາຍພິເສດດ້ານການເງິນ ຕໍ່ແຂວງທີ່ມີຄວາມຫຍຸ້ງຍາກ, ແຂວງທີ່ເປັນພື້ນຖານການປະຕິວັດ ແລ້ວລາຍງານກົມການເມືອງ ໃຫ້ທິດຊີ້ນຳ; ນຳໃຊ້ເງິນເກີນແຜນ ຂອງທ້ອງຖິ່ນ ຢ່າງເໝາະສົມ; ຄົ້ນຄວ້າການເພີ່ມເງິນເດືອນ, ເງິນອຸດໜູນພະນັກງານ ໃຫ້ດຸ່ນດ່ຽງ, ແທດເໝາະກັບຄ່າຄອງຊີບໃນປັດຈຸບັນ; ຄົ້ນຄວ້າເປັນບຸລິມະສິດໃຫ້ໂກຕາລັດຖະກອນແກ່ ຄູ, ແພດໝໍ ຢູ່ເຂດຫ່າງໄກສອກຫຼີກ; ຊຳລະໜີ້ສິນຕ່າງປະເທດ ໃຫ້ໄດ້ຕາມແຜນການທີ່ວາງໄວ້.

(7) ດ້ານເງິນຕາ, ສືບຕໍ່ຄວບຄຸມອັດຕາເງິນເຟີ້ໃນ 3 ເດືອນທ້າຍປີນີ້ ໂດຍສູ້ຊົນໃຫ້ຫຼຸດລົງຕ່ຳກວ່າ 20%; ຄຸ້ມຄອງ ແລະ ເສີມຂະຫຍາຍຕະຫຼາດແລກປ່ຽນເງິນຕາ (LFX) ໃຫ້ຮັດກຸມ; ຄວບຄຸມປະລິມານເງິນ M2; ຄຸ້ມຄອງທຶນຈົດທະບຽນຂອງ FDI ແລະ ຄຸ້ມຄອງການຊຳລະຄ່າບໍລິການຜ່ານລະບົບທະນາຄານ ໃຫ້ຫຼາຍຂຶ້ນ, ເຄັ່ງຄັດ ແລະ ເຂັ້ມງວດ.

(8) ປັບປຸງໂຄງລ່າງພື້ນຖານ, ເສັ້ນທາງຄົມມະນາຄົມ ທີ່ເປ່ເພ, ຊຸດໂຊມ ແລະ ຖືກຜົນກະທົບ ຈາກໄພນ້ຳຖ້ວມ; ນຳໃຊ້ງົບປະມານ, ເງິນຊ່ວຍເຫຼືອຕ່າງໆ (ODA) ໃຫ້ມີປະສິດທິຜົນ; ເປັນເຈົ້າການພັນຂະຫຍາຍຜົນການຮ່ວມມືກັບປະເທດເພື່ອນມິດ ກ່ຽວກັບບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ ທີ່ໄດ້ຕົກລົງກັນ ໃຫ້ເປັນຮູບປະທຳ, ສູ້ຊົນ ວາງແຜນປັບປຸງພື້ນຖານໂຄງລ່າງ ຢູ່ເຂດທີ່ໝັ້ນການປະຕິວັດເກົ່າ.

(9) ສູ້ຊົນປະຕິບັດບັນດາຄາດໝາຍ ດ້ານວັດທະນະທຳ-ສັງຄົມ ໃຫ້ບັນລຸຕາມແຜນ; ສຸມໃສ່ການພັດທະນາຊັບພະຍາກອນມະນຸດ, ປັບປຸງຄຸນນະພາບການສຶກສາ, ແກ້ໄຂສະພາບຂາດແຄນຄູ ແລະ ການປະລະການຮຽນ ໃຫ້ແຂງແຮງກວ່າເກົ່າ; ປັບປຸງລະບົບການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບດີຂຶ້ນ, ປັບປຸງນະໂຍບາຍການປິ່ນປົວສຸຂະພາບ ໃຫ້ທົ່ວເຖິງ; ຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດ ຢ່າງລວມສູນ, ແກ້ໄຂບັນຫາແຮງງານ, ສ້າງແຮງງານ ຕາມຄວາມຕ້ອງການຂອງຕະຫຼາດ; ເລັ່ງພັດທະນາລະບົບການບໍລິການການທ່ອງທ່ຽວ ແລະ ພື້ນຖານໂຄງລ່າງ ໃຫ້ມີຄວາມສະດວກ; ເອົາໃຈໃສ່ປັບປຸງສື່ຕ່າງໆ ໃຫ້ມີຄວາມເຂັ້ມແຂງ ສາມາດຮັບປະກັນການເຮັດບົດບາດເປັນກະບອກສຽງໃນການເສີມຂະຫຍາຍບົດບາດການນຳພາ ຂອງພັກ, ເພີ່ມຄວາມສັດທາ ແລະ ຄວາມເຊື່ອໝັ້ນ ຂອງປະຊາຊົນຕໍ່ພັກ, ເພີ່ມທະວີຄວາມເປັນເຈົ້າການ ໃນການຕອບໂຕ້ການໃສ່ຮ້າຍປ້າຍສີ ຂອງພວກຄົນບໍ່ຫວັງດີ; ເດັດດ່ຽວແກ້ໄຂບັນຫາຢາເສບຕິດ, ປຸກລະດົມການມີສ່ວນຮ່ວມ ຂອງທຸກພາກສ່ວນໃນສັງຄົມ ໃຫ້ເປັນຂະບວນການກວ້າງຂວາງ, ປົກກະຕິ ແລະ ມີປະສິດທິຜົນ.

**2. ການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຈຳປີ 2024 ແລະ ທິດທາງ ປີ 2025**

ກອງປະຊຸມ ໄດ້ຕີລາຄາວ່າ ສະພາບພາກພື້ນ ແລະ ສາກົນ ສືບຕໍ່ມີຄວາມສັບສົນ, ຜັນແປສະຫຼັບຊັບຊ້ອນ, ພວກຄົນບໍ່ດີ ຍັງສືບຕໍ່ມ້າງເພທຳລາຍປະເທດເຮົາ ຢ່າງບໍ່ລົດລະ, ແຕ່ພາຍໃຕ້ການນຳພາຢ່າງແທດເຖິງ ຂອງສູນກາງພັກ ແລະ ການປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນ

ຄວາມສະຫງົບຂອງພັກ ຢ່າງຕັ້ງໜ້າ ແລະ ເປັນໃຈກາງ ຕິດພັນກັບການເຄື່ອນໄຫວວຽກງານຕ່າງປະເທດ ຢ່າງມີພົນໄຫວ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄວາມໝັ້ນຄົງ ໃນໄລຍະ 1 ປີ ຜ່ານມາ ສາມາດຍາດໄດ້ຜົນສໍາເລັດຫຼາຍດ້ານ ທີ່ເປັນໜ້າພາກພູມໃຈ ໂດຍສະເພາະການເປັນປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44, 45, ກອງປະຊຸມໄອປາ ຄັ້ງທີ 45, ກອງປະຊຸມປິ່ນອ້ອມ ແລະ ການເຄື່ອນໄຫວວຽກງານຕ່າງປະເທດຈໍານວນໜຶ່ງ, ສາມາດຮັບປະກັນໄດ້ຄວາມສະຫງົບ-ປອດໄພ; ວຽກງານ ປກຊ-ປກສ ໄດ້ຮັບການສະໜັບສະໜູນ ແລະ ການເຂົ້າຮ່ວມຈາກປວງຊົນ ຢ່າງກວ້າງຂວາງ; ການຈັດຕັ້ງປະຕິບັດຄໍາຕັດສິນທີ່ໃຊ້ໄດ້ເດັດຂາດຂອງສານ ກໍ່ມີດ້ານຕັ້ງໜ້າ. ໂດຍລວມແລ້ວ, ພວກເຮົາຮັກສາໄດ້ສະຖຽນລະພາບດ້ານການເມືອງ, ຮັບປະກັນຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍໃນສັງຄົມ.

ກອງປະຊຸມ ໄດ້ຍົກໃຫ້ເຫັນບັນຫາທ້າທາຍຕ່າງໆ ທີ່ເກີດຈາກປັດໃຈພາຍໃນ-ພາຍນອກ ແລະ ບັນຫາທີ່ຕ້ອງໄດ້ເອົາໃຈໃສ່, ເປັນຕົ້ນ ການນໍາພາ, ການແກ້ໄຂບັນຫາຢູ່ຮາກຖານການເມືອງ ບໍ່ທັນຮັບປະກັນຄວາມໜັກແໜ້ນ, ການປຸກລະດົມທົ່ວປວງຊົນ ແລະ ການມີສ່ວນຮ່ວມຂອງສັງຄົມ ປະກອບສ່ວນ ໃນວຽກງານ ປກຊ-ປກສ ບໍ່ທັນເປັນຂະບວນກວ້າງຂວາງ ແລະ ແຂງແຮງເທົ່າທີ່ຄວນ.

**ກອງປະຊຸມ ໄດ້ເປັນເອກະພາບ ໃຫ້ທິດຊີ້ນໍາຕໍ່ວຽກງານຈຸດສຸມ ໃນຕໍ່ໜ້າ ດັ່ງນີ້:**

(1). ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

- ເພີ່ມທະວີການຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ, ໄປຄຽງຄູ່ກັບການປັບປຸງລະບົບການເມືອງ ຢູ່ຂັ້ນຮາກຖານ ໃຫ້ໜັກແໜ້ນ, ເຂັ້ມແຂງ; ເປັນເຈົ້າການ ແກ້ໄຂບັນດາໜໍ່ແໜງ ຄວາມບໍ່ສະຫງົບ; ປຸກລະດົມຂົນຂວາຍປະຊາຊົນ ກໍ່ຄື ທຸກພາກສ່ວນໃນສັງຄົມ ໃຫ້ເຂົ້າຮ່ວມວຽກງານ ປກຊ-ປກສ ທົ່ວປວງຊົນຮອບດ້ານ ໃຫ້ກາຍເປັນຂະບວນກວ້າງຂວາງກວ່າເກົ່າ.

- ເອົາໃຈໃສ່ກໍ່ສ້າງ, ປັບປຸງສອງກໍາລັງ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ; ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ, ມີຄວາມຈົງຮັກພັກດີ ແລະ ມີນໍ້າໃຈຮັກຊາດ ອັນດູດດື່ມ ຄຽງຄູ່ກັບການຍົກລະດັບການປະກອບອາວຸດຍຸດໂທປະກອນ ໃຫ້ທັນສະໄໝຂຶ້ນເທື່ອລະກ້າວ.

- ຮ່ວມມື ແລະ ປະສານສົມທົບແໜ້ນກັບປະເທດເພື່ອນບ້ານ ໃນວຽກງານຮັກສາຄວາມສະຫງົບຕາມບໍລິເວນຊາຍແດນ, ການປັກຫຼັກໝາຍຊາຍແດນ, ການສະກັດກັ້ນອາຊະຍາກໍາຂ້າມຊາດ, ການເຂົ້າ-ອອກເມືອງຜິດກົດໝາຍ, ການອົບພະຍົບ, ການຍົກຍ້າຍຖິ່ນຖານພູມລໍາເນົາ ແລະ ທໍາມາຫາກິນ, ບຸກລຸກປ່າໄມ້ແບບຊະຊາຍ, ການຄ້າມະນຸດ, ການຂົນສົ່ງຢາເສບຕິດ, ການລັກລອບຂຸດຄົ້ນຊັບພະຍາກອນທໍາມະຊາດ ແລະ ປະກົດການຫຍໍ້ທໍ້ອື່ນໆ.

- ເປັນເຈົ້າການແກ້ໄຂປະກົດການຫຍໍ້ໃນສັງຄົມ, ບັນຫາການຄ້າ-ຂາຍ ແລະ ແກ້ໄຂເດັດຂາດອາວຸດເຖື່ອນ, ຂະບວນກຸ່ມແກ໊ງຄອບຄອງອາວຸດກໍ່ຄວາມບໍ່ສະຫງົບ, ຂະບວນກຸ່ມແກ໊ງສໍ້ໂກງຊັບທາງໂທລະຄົມ, ລາດຕະກໍາ, ປຸ້ນຈີ້ຊີງຊັບ ແລະ ອຸບັດຕິເຫດຕາມທ້ອງຖະໜົນ.

- ສືບຕໍ່ປະຕິບັດວາລະແຫ່ງແກ້ໄຂຢາເສບຕິດ ໃຫ້ແຂງແຮງ, ເລິກເຊິ່ງ, ແທດເຖິງກວ່າເກົ່າ ໂດຍມີການເຂົ້າຮ່ວມ ຂອງສັງຄົມຢ່າງກວ້າງຂວາງ; ເອົາໃຈໃສ່ປະສານສົມທົບ ລະຫວ່າງສອງກຳລັງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂຂອດການປະສານງານ, ປະຕິບັດໜ້າທີ່ວິຊາສະເພາະ ໃຫ້ມີຄວາມເປັນເອກະພາບ, ກົມກຽວ; ພ້ອມດຽວກັນນັ້ນ ເພີ່ມທະວີວຽກງານສືບຂ່າວ, ສືບສວນ-ສອບສວນ ໂດຍຍົກລະດັບທາງດ້ານເຕັກນິກ, ວິຊາສະເພາະ, ເຄື່ອງມືອຸປະກອນ ໃຫ້ຄົບຊຸດ, ທັນສະໄໝ ແລະ ສືບຕໍ່ແກ້ໄຂບັນຫາຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ບັນລຸຕາມຄາດໝາຍ ໃນທ້າຍສະໄໝນີ້;

- ເອົາໃຈໃສ່ຄຸ້ມຄອງອົງການຈັດຕັ້ງສາກົນ, ອົງການຈັດຕັ້ງ ທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ການນຳໃຊ້ສື່ອອນລາຍ ໃຫ້ຖືກກົດໝາຍ; ສ້າງ, ປັບປຸງ ນິຕິກຳກ່ຽວຂ້ອງ ໃຫ້ສອດຄ່ອງ ແລະ ເພີ່ມທະວີການຕອບຕ້ານໃນແຕ່ລະບັນຫາ ຢ່າງມີສະຕິ, ຄ່ອງແຄ້ວ ແລະ ທັນການ ດ້ວຍການໂຄສະນາຂໍ້ມູນຂ່າວສານ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງ.

(2). ວຽກງານການຕ່າງປະເທດ

- ປະຕິບັດນະໂຍບາຍການຕ່າງປະເທດຂອງພັກ ຢ່າງຄ່ອງແຄ້ວ, ມີພົນໄຫວ; ສືບຕໍ່ຍຶດໝັ້ນ ແລະ ຮັບປະກັນການປະຕິບັດຕາມທິດນຳ ການທູດປ້ອງກັນເທດ ແລະ ບຸກທະລຸ, ເພີ່ມມິດຫຼຸດຜ່ອນສັດຕູ ຢ່າງຕັ້ງໜ້າ.

- ເອົາໃຈໃສ່ຕິດຕາມ, ວິເຄາະ, ວິໄຈ ແລະ ກຳແໜ້ນ ສະພາບການ, ພ້ອມທັງ ຄົ້ນຄວ້າ, ວາງທັດສະນະ ຕໍ່ແຕ່ລະບັນຫາຢ່າງມີຈຸດສຸມ ແລະ ຊັດເຈນ.

- ສືບຕໍ່ຮັກສາສາຍສຳພັນອັນດີ ໃນການພົວພັນຮ່ວມມືກັບທຸກປະເທດ; ເພີ່ມທະວີການພົວພັນຮ່ວມມືຮອບດ້ານ ກັບປະເທດເພື່ອນມິດຍຸດທະສາດ, ເປັນເຈົ້າການປະສານງານ ແລະ ຕິດຕາມຊຸກຍູ້ການຈັດຕັ້ງພັນຂະຫຍາຍຂໍ້ຕົກລົງ ແລະ ສັນຍາຮ່ວມມືກັບຕ່າງປະເທດ ໃຫ້ມີປະສິດທິຜົນ.

- ເສີມຂະຫຍາຍກຳລັງແຮງສັງລວມ, ປະສານງານຢ່າງກົມກຽວລະຫວ່າງອົງການຈັດຕັ້ງ ໃນລະບົບການເມືອງ ທັງສາຍພັກ, ສາຍລັດ, ອົງການຈັດຕັ້ງມະຫາຊົນ ແລະ ພາກປະຊາຊົນ ເພື່ອປະຕິບັດວຽກງານຕ່າງປະເທດ ໃຫ້ມີປະສິດທິຜົນ; ບຸກລະດົມຂົນຂວາຍ ພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ໃຫ້ອ່ວາຍໜ້າມາຫາບ້ານເກີດເມືອງນອນ ຂອງຕົນ ໃຫ້ຫຼາຍຂຶ້ນ.

- ຍູ້ແຮງການເຄື່ອນໄຫວການທູດເສດຖະກິດ, ທຸກຂະແໜງການ, ອົງການ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການເຂົ້າຮ່ວມເຄື່ອນໄຫວ ຢ່າງຕັ້ງໜ້າ, ພັນຂະຫຍາຍຜົນສຳເລັດ ກອງປະຊຸມສຸດຍອດອາຊຽນ, ກອງປະຊຸມເອປາ ແລະ ກອງປະຊຸມປິ່ນອ້ອມອື່ນໆ ເປັນອັນລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງສຸດ.

- ເອົາໃຈໃສ່ເປັນເຈົ້າການພັນຂະຫຍາຍບົດບັນທຶກຊ່ວຍຈຳ, ຂໍ້ຕົກລົງ ແລະ ສົນທິສັນຍາສອງຝ່າຍ ແລະ ຫຼາຍຝ່າຍ ລະຫວ່າງປະເທດເຮົາກັບສາກົນ ແລະ ຜົນການພົບປະການນຳຂັ້ນສູງປະເທດເຮົາ ກັບບັນດາປະເທດຕ່າງໆ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນ ຢ່າງແທ້ຈິງ.

- ຄົ້ນຄວ້າສ້າງແຜນການເຄື່ອນໄຫວຕ່າງປະເທດ ປະຈຳປີ 2025 ຢ່າງມີຈຸດສຸມ ແລະ ເໝາະສົມກັບສະພາບເງື່ອນໄຂຕົວຈິງ, ສູ້ຊົນໃຫ້ການເຄື່ອນໄຫວຕ່າງປະເທດ ມີຄວາມກົມກຽວ ເປັນເອກະພາບລວມສູນ ທົ່ວປະເທດ.

**(3). ການປະຕິບັດຄຳຕັດສິນທີ່ໃຊ້ໄດ້ເດັດຂາດຂອງສານ**

- ມອບໃຫ້ຄະນະພັກແຕ່ລະຂັ້ນ ເພີ່ມທະວີວຽກງານການນຳພາ ແລະ ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ເດັດຂາດ ຂອງສານ ໃຫ້ວ່ອງໄວ, ຖືກຕ້ອງຕາມກົດໝາຍ ແລະ ເໝາະສົມກັບຄວາມເປັນຈິງ, ຮັບປະກັນຄວາມຍຸຕິທຳ ໃນສັງຄົມ.

- ກວດກາການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ, ບໍ່ໃຫ້ມີຊ່ອງຫວ່າງສວຍໂອກາດ; ປັບປຸງແບບແຜນວິທີເຮັດວຽກ, ກົນໄກປະສານງານ, ເປັນເຈົ້າການຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ເດັດຂາດ ຂອງສານ ໃຫ້ສິ້ນສຸດ, ບຸກທະລຸບໍ່ໃຫ້ມີຄະດີຄົງຄ້າງ ແກ່ຍາວອີກ.

- ສຸມໃສ່ປັບປຸງກົງຈັກການຈັດຕັ້ງ, ສັບຊ້ອນພະນັກງານໃຫ້ເໝາະສົມກັບສະພາບຕົວຈິງ, ສ້າງ ແລະ ຈັດຕັ້ງປະຕິບັດກົນໄກປະສານງານ ຂອງອົງການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີປະສິດທິພາບ; ຮີບຮ້ອນປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ພົວພັນເຖິງການປະຕິບັດຄຳຕັດສິນ ຂອງສານ ໃຫ້ເໝາະສົມກັບຕົວຈິງ.

- ຕໍ່ການສະເໜີ ແຕ່ງຕັ້ງຄະນະຊີ້ນຳການປະຕິບັດຄຳຕັດສິນທີ່ໃຊ້ໄດ້ເດັດຂາດ ຂອງສານ ໃຫ້ຄົ້ນຄວ້າຕື່ມອີກ, ສຳຄັນແມ່ນນຳໃຊ້ລະບົບກົນໄກທີ່ມີຢູ່ແຕ່ລະຂັ້ນ ໃຫ້ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ, ກໍລະນີຄະດີໃດທີ່ມີຄວາມຫຍຸ້ງຍາກສັບສົນ ຈຶ່ງແຕ່ງຕັ້ງຄະນະ ຫຼື ປຶກສາຮ່ວມກັນແກ້ໄຂ ໄປຕາມກໍລະນີ.

- ໃຫ້ຮີບຮ້ອນຊຳລະສະສາງສັບສິນ ທີ່ຢຶດໄດ້ຈາກຄະດີຢາເສບຕິດ ເພື່ອບໍ່ໃຫ້ຊັບສິນເຫຼົ່ານັ້ນ ເສື່ອມມູນຄ່າ, ເອົາເງິນເຂົ້າງົບປະມານຂອງລັດ ເພື່ອນຳໃຊ້ເຂົ້າວຽກງານທີ່ຈຳເປັນ.

**3. ຕີລາຄາຜົນການດຳເນີນກອງປະຊຸມໃຫຍ່ ຂັ້ນຮາກຖານພັກອ້ອມຂ້າງເມືອງ-ນະຄອນ ແລະ ຮາກຖານບ້ານ ແລະ ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ ແລະຮາກຖານພັກ ອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ຮາກຖານພັກ ອ້ອມຂ້າງກະຊວງ-ອົງການ**

ກອງປະຊຸມ ໄດ້ຕີລາຄາວ່າ ການດຳເນີນກອງປະຊຸມໃຫຍ່ຢູ່ຮາກຖານພັກ ສ່ວນໃຫຍ່ປະຕິບັດໄປຕາມຄຳແນະນຳ ແລະ ນິຕິກຳ ຂອງສູນກາງ ແລະ ພາກສ່ວນກ່ຽວຂ້ອງວາງອອກ; ດ້ານເນື້ອໃນ, ສາມາດກຳນົດທ່າແຮງ ແລະ ຈຸດສຸມພັດທະນາຂອງຕົນ ໄດ້ໂດຍພື້ນຖານ; ດ້ານບຸກຄະລາກອນ ກໍຮັບປະກັນໄດ້ຜູ້ມີມາດຖານ, ເງື່ອນໄຂ ເປັນສ່ວນໃຫຍ່; ດ້ານຂະບວນການ ໄດ້ສຸມໃສ່ຕິດພັນກັບການປັບປຸງການຈັດຕັ້ງ, ວຽກງານວິຊາສະເພາະ ແລະ ການປະຕິບັດຂໍ້ແຂ່ງຂັນ ຈຳນວນໜຶ່ງ... ແຕ່ຜ່ານການປະຕິບັດຕົວຈິງ ເຫັນໄດ້ບັນຫາຈຳນວນໜຶ່ງ ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ໂດຍສະເພາະການກຳນົດທ່າແຮງບົ່ມຊ້ອນຂອງຮາກຖານ ຍັງບໍ່ເໝາະສົມກັບຕົວຈິງເທົ່າທີ່ຄວນ, ການທັບ

ເປັນໜຸ່ມມີຂໍ້ຈໍາກັດ, ຂະບວນການມີລັກສະນະຊົ່ວຄາວ, ການດໍາເນີນຊີວິດການເມືອງ ບໍ່ເລິກເຊິ່ງ ບໍ່ທັນສ້າງໄດ້ການຫັນປ່ຽນໃໝ່ ທີ່ແຂງແຮງ.

ກອງປະຊຸມ ໄດ້ເປັນໂອກາດ ໃຫ້ທິດຊີ້ນໍາຕໍ່ການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ **ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ຮາກຖານພັກ ອ້ອມຂ້າງກະຊວງ-ອົງການ ໃນຕໍ່ໜ້າ ດັ່ງນີ້:**

(1) ຄະນະພັກແຕ່ລະຂັ້ນ ສືບຕໍ່ເອົາໃຈໃສ່ປະຕິບັດ ຄໍາແນະນໍາ ແລະ ນິຕິກໍາ ຂອງສູນກາງ ແລະ ພາກສ່ວນກ່ຽວຂ້ອງວາງອອກ ເປັນຕົ້ນ:

- ດ້ານເນື້ອໃນ: ຕ້ອງຕີລາຄາໃຫ້ເຫັນການຊີ້ນໍາ-ນໍາພາ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜ່ານມາ ໃຫ້ຖືກກັບຄວາມເປັນຈິງ, ພາວະວິໄສ, ຊອກໃຫ້ເຫັນດ້ານຕັ້ງໜ້າ ແລະ ຂໍ້ຄົງຄ້າງ ເພື່ອຖອດຖອນບົດຮຽນ, ກໍານົດທິດທາງ, ໜ້າທີ່ ແກ້ໄຂໃນຕໍ່ໜ້າ ໃຫ້ສອດຄ່ອງກັບທ່າແຮງຂອງແຕ່ລະທ້ອງຖິ່ນ.

- ດ້ານບຸກຄະລາກອນ: ຕິດຕາມ ແລະ ຊຸກຍູ້ການດໍາເນີນຊີວິດການເມືອງ ໃຫ້ເລິກເຊິ່ງ, ກ້າເບິ່ງບັນຫາ ແລະ ຍອມຮັບຄວາມເປັນຈິງ, ບົນຫຼັກການຂອງພັກ, ຖືເອົາໜ້າທີ່ມາດຖານ ແລະ ຂໍ້ຫ້າມຂອງສະມາຊິກພັກ, ມາດຖານຂອງຄະນະພັກ ເປັນພື້ນຖານການດໍາເນີນຊີວິດການເມືອງ ກໍ່ຄືການຕີລາຄາສະມາຊິກພັກ ແລະ ຄະນະພັກ; ໃນຄະນະພັກເມືອງຊຸດໃໝ່ ຕ້ອງເອົາໃຈໃສ່ເຖິງໂຄງປະກອບທັງ 3 ອັນ: ໜຸ່ມ, ກາງ, ອາວຸໂສ ໃນນີ້ ໜຸ່ມ ແລະ ກາງ ກວມອັດຕາສ່ວນຫຼາຍ, ພ້ອມທັງເອົາໃຈໃສ່ໂຄງປະກອບ ເພດ, ເຜົ່າ ແລະ ມີທັງຜູ້ເປັນເລຂາຄະນະພັກຮາກຖານກຸ່ມບ້ານ... ຕ້ອງຮັບປະກັນມາດຖານ, ເງື່ອນໄຂ, ຖືກຕ້ອງຕາມຂັ້ນຕອນ, ລະບຽບການ ຂອງການເລືອກຟັ້ນ ໂດຍໃຫ້ໄດ້ຜູ້ທີ່ພົ້ນເດັ່ນໃນຂະບວນການວຽກງານຕົວຈິງ, ຜູ້ຈົ່ງຮັກພັກດີ ອັດແທ້ທໍາຈິງ; ສະເພາະຢູ່ຮາກຖານບ້ານ ການຫັນເປັນໜຸ່ມແມ່ນມີຂໍ້ຈໍາກັດ ແຕ່ກໍ່ຕ້ອງໄດ້ພະຍາຍາມແກ້ໄຂ, ເມືອງຕ້ອງລົງຊ່ວຍບ້ານ ປູກລະດົມຂົນຂວາຍ ຢ່າງສຸດຂີດ, ແຕ່ຖ້າຈໍາເປັນ ໄດ້ຜູ້ອາຍຸສູງ ປະຊາຊົນເພິ່ງພໍໃຈ ກໍ່ໃຫ້ຄົ້ນຄວ້າ ຢ່າງປະດິດສ້າງ ໄປຄຽງຄູ່ກັບການຝຶກອົບຮົມ ສ້າງຄວາມເຂັ້ມແຂງ ໃຫ້ເຂົາເຈົ້າ.

- ດ້ານຂະບວນການ: ສືບຕໍ່ວຽກງານສຶກສາອົບຮົມການເມືອງ-ແນວຄິດ, ປຸກລະດົມທົ່ວປວງຊົນ, ມະຫາຊົນ ໃຫ້ເຂົ້າຮ່ວມຂະບວນການຕ່າງໆ ຢ່າງແຂງແຮງ, ກວ້າງຂວາງ, ຟົດຟື້ນ ແລະ ຕໍ່ເນື່ອງ ແນໃສ່ສ້າງການຫັນປ່ຽນໃນການປະຕິບັດ ມະຕິກອງປະຊຸມໃຫຍ່ ຂັ້ນຕົນວາງອອກ ກໍ່ຄື ແກ້ໄຂບັນຫາທີ່ເກີດຂຶ້ນ ໃຫ້ມີຜົນສໍາເລັດຕົວຈິງ.

(2) ຖອດຖອນບົດຮຽນການຈັດຕັ້ງດໍາເນີນກອງປະຊຸມໃຫຍ່ຮາກຖານ ຜ່ານມາ ເພື່ອປັບປຸງ ພັນຂະຫຍາຍ ແລະ ສ້າງເປັນພື້ນຖານໃຫ້ແກ່ການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ຮາກຖານພັກ ທີ່ຍັງບໍ່ທັນສໍາເລັດ ກໍ່ຄື ກອງປະຊຸມໃຫຍ່ ອົງຄະນະພັກເມືອງ-ນະຄອນ ໃນຕໍ່ໜ້າ ໃຫ້ຮັບປະກັນຄວາມພ້ອມຮອບດ້ານ.

4. ການປັບປຸງເອກະສານ ທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ສະໄໝທີ XII ຂອງພັກ (ຮ່າງໂຄງການການເມືອງ ຂອງພັກ ສະບັບທີ 3, ຮ່າງລາຍງານການເມືອງ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X , ການປັບປຸງກົດລະບຽບຂອງພັກ ສະໄໝທີ XI)

ກອງປະຊຸມ ໄດ້ຕີລາຄາສູງ ແລະ ຊົມເຊີຍ ຄະນະຮັບຜິດຊອບ ກໍຄື ບັນດາອະນຸກຳມະການຕ່າງໆ ທີ່ໄດ້ເປັນເຈົ້າການຕັ້ງໜ້າ ສຸມເຫື່ອແຮງ, ສະຕິປັນຍາ ສືບຕໍ່ປັບປຸງເອກະສານທີ່ເປັນຍຸດທະສາດສຳຄັນດັ່ງກ່າວ ຕາມການຊີ້ນຳຂອງກົມການເມືອງ ກໍຄືສູນກາງພັກ ຢ່າງເປັນລະບົບຕໍ່ເນື່ອງ ເຮັດໃຫ້ບັນດາເນື້ອໃນຕ່າງໆ ກາຍເປັນໝາກຜົນລວມຍອດແຫ່ງສະຕິປັນຍາຂອງພັກ-ລັດ ແລະ ປະຊາຊົນບັນດາເຜົ່າ ທີ່ມີວິທະຍາສາດ, ພາວະວິໄສ ແລະ ແທດກັບຕົວຈິງຂອງປະເທດເຮົາ.

(1) ຕໍ່ຮ່າງໂຄງການການເມືອງຂອງພັກ ສະບັບທີ 03

- ຮັບຮອງເອົາການປັບປຸງໂຄງຮ່າງ ຈາກ 03 ພາກໃຫຍ່ ເປັນ 02 ພາກໃຫຍ່ ເຊິ່ງເຫັນວ່າ ສົມເຫດສົມຜົນ ແລະ ສອດຄ່ອງກັບສະພາບຕົວຈິງ; ບັນດາເນື້ອໃນ, ທິດທາງ ແລະ ຄາດໝາຍໃຫຍ່ ທີ່ຈະບັນລຸໃນຕໍ່ໜ້າຂອງພັກເຮົາ ໄດ້ກຳນົດຈະແຈ້ງຂຶ້ນ; ການໃຊ້ຄຳສັບ, ປະໂຫຍກຄຳເວົ້າ ກໍກະທັດຮັດ, ເຂົ້າໃຈງ່າຍ ໂດຍສະເພາະ ການວາງຄາດໝາຍສູ້ຊົນ ຮອດປີ 2055 ໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງພັກ ຄົບຮອບ 100 ປີນັ້ນ, ເຫັນວ່າ ບັນດາຈຸດໝາຍແຕ່ລະດ້ານ ແລະ ບັນດາໜ້າວຽກ ແມ່ນສະແດງອອກຄົບຖ້ວນ, ຈະແຈ້ງພໍສົມຄວນ ຈະສາມາດສ້າງປະເທດເຮົາເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດທີ່ທັນສະໄໝ, ກຳລັງການຜະລິດໄດ້ຮັບການພັດທະນາຢ່າງຮອບດ້ານ ສອດຄ່ອງກັບການພົວພັນການຜະລິດທີ່ກ້າວໜ້າ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ມີພື້ນຖານອັນໜັກແໜ້ນ ກ້າວໄປສູ່ຄວາມອີ່ມໜຳສຳລານ.

(2) ຕໍ່ຮ່າງລາຍການເມືອງ

- ກ່ຽວກັບຄຳຂວັນ: ໂດຍລວມ ແມ່ນເຫັນດີຕາມທີ່ອະນຸກຳມະການເນື້ອໃນ ໄດ້ກຳນົດມານັ້ນ, ແຕ່ໃຫ້ຄົ້ນຄວ້າປັບປຸງຕື່ມໃຫ້ມີເນື້ອໃນກວມລວມ, ອັນສຳຄັນ ສ່ອງແສງໃຫ້ເຫັນບົດບາດເປັນແກນກາງ ໃນການນຳພາຂອງພັກ, ການສ້າງເສດຖະກິດເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ຢ່າງແຂງແຮງ, ນຳພາປະເທດຊາດ ກ້າວຂຶ້ນຢ່າງໜັກແໜ້ນຕາມເສັ້ນທາງສັງຄົມນິຍົມ.

- ດ້ານໂຄງປະກອບ: ແມ່ນເຫັນດີ ໂດຍພື້ນຖານ ຕາມຮ່າງສະບັບຫຼ້າສຸດ ໂດຍແຍກວຽກງານກວດກາ, ການປ້ອງກັນ, ການຕ້ານ, ສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງ ເປັນຫົວຂໍ້ໜຶ່ງຕ່າງຫາກ ເພື່ອຍົກວຽກງານດັ່ງກ່າວ ໃຫ້ພົ້ນເດັ່ນຂຶ້ນ ໃນສະໄໝນີ້.

- ດ້ານເນື້ອໃນ: ເຫັນດີໃຫ້ແຍກເອົາການສະຫຼຸບຕີລາຄາ 40 ປີ ແຫ່ງການປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ ເປັນເອກະສານໜຶ່ງຕ່າງຫາກ ແລະ ໃຫ້ນຳເຂົ້າລາຍງານຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງພັກ ຄັ້ງທີ XII ເນື່ອງຈາກ ປີ 2026 ພໍດີຄົບຮອບ 40 ປີ ແຫ່ງການປ່ຽນແປງໃໝ່ ຂອງພັກເຮົາ.

(3) ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ

- ດ້ານຄຳຂວັນ: ໂດຍພື້ນຖານ ແມ່ນເຫັນດີໃຫ້ປັບປຸງຕື່ມຕາມຄຳເຫັນຂອງກອງປະຊຸມ, ສຳຄັນ ແມ່ນໃຫ້ມີເນື້ອໃນສັ້ນກະທັດຮັດ, ເຂົ້າໃຈງ່າຍ ແລະ ສ່ອງແສງໃຫ້ເຫັນບັນຫາບຸລິມະສິດ ທີ່ເຮົາຈະຕ້ອງເຮັດໃນ 05 ປີ ຕໍ່ໜ້າ.

- ດ້ານເນື້ອໃນ: ເຫັນດີໃຫ້ປັບປຸງ ໃນພາກຕີລາຄາ ໂດຍສະເພາະຂໍ້ຄົງຄ້າງ, ຕ້ອງຊອກໃຫ້ເຫັນສາເຫດ ຢ່າງຈະແຈ້ງ; ການກຳນົດທິດທາງ ແລະ ຄາດໝາຍໃໝ່ນັ້ນ ຕ້ອງໃຫ້ຢູ່ໃນທ່າບຸກບືນສູ້ຊົນ; ໃນການກຳນົດໂຄງປະກອບເສດຖະກິດ ຕ້ອງອີງໃສ່ທ່າແຮງຕົວຈິງ ໃນປັດຈຸບັນ, ການກຳນົດເສດຖະກິດປາຍແຫຼມ, ການກຳນົດພື້ນຖານເສດຖະກິດເປັນຂອງຕົນເອງ, ການພັດທະນາເຂດແຄວ້ນ ຕ້ອງກຳນົດຢ່າງມີຈຸດສຸມ; ການລົງທຶນຂອງລັດ ຕ້ອງສຸມໃສ່ໂຄງການທີ່ຈະສ້າງຖານລາຍຮັບເປັນບຸລິມະສິດ ແລະ ການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກ; ການລົງທຶນຕ່າງປະເທດ, ຕ້ອງແກ້ໄຂຂໍ້ຂອດອັດຕັນ ແລະ ສ້າງເງື່ອນໄຂອຳນວຍໃຫ້ແກ່ການລົງທຶນຂະໜາດໃຫຍ່, ຕິດພັນກັບການພັດທະນາແບບຍືນຍົງ ແລະ ສີຂຽວ; ໃຫ້ສືບຕໍ່ຄົ້ນຄວ້າການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ລວມເຖິງເນື້ອໃນຂອງ ດຳລັດ 348 ໃຫ້ແທດເໝາະກັບຕົວຈິງຂອງປະເທດເຮົາ; ການກຳນົດທິດທາງແກ້ໄຂບັນຫາການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ, ການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ການແກ້ໄຂການຂາດແຄນຄູ-ແພດໝໍ, ການປະລະການຮຽນ, ບັນຫາແຮງງານ... ຕ້ອງກຳນົດທິດ ຢ່າງມີຈຸດສຸມຈະແຈ້ງ ແລະ ສືບຕໍ່ກວດຄືນບັນດາເນື້ອໃນ ຂອງແຜນພັດທະນາເສດຖະກິດ-ສັງຄົມ ຕ້ອງເປັນແຜນພັນຂະຫຍາຍຮ່າງລາຍງານການເມືອງ ຢ່າງຄົບຖ້ວນ.

(4) ຕໍ່ເອກະສານກົດລະບຽບຂອງພັກ (ສະບັບປັບປຸງ)

- ສືບຕໍ່ປັບປຸງເນື້ອໃນຮ່າງກົດລະບຽບຂອງພັກ (ສະບັບປັບປຸງ) ໃຫ້ຄົບຖ້ວນ, ຊັດເຈນ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ແຕ່ບໍ່ໝາຍຄວາມວ່າ ທຸກບັນຫາ, ທຸກໜ້າວຽກ ຕ້ອງໄດ້ກຳນົດເຂົ້າໃນກົດລະບຽບພັກ ທັງໝົດ.

- ບັນຫາທີ່ຍັງຄຸມເຄືອ, ໃຫ້ສືບຕໍ່ລົງເລິກຄົ້ນຄວ້າ ແລະ ປັບປຸງໃຫ້ແທດກັບສະພາບຕົວຈິງ ແລະ ທັງສາມາດຮອງຮັບກັບບັນດາແນວທາງຂອງພັກ ໃນໄລຍະໃໝ່ ໂດຍສະເພາະບັນຫາໃຫຍ່ໆ ທີ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຈະຮັບຮອງເອົາ.

- ສຳລັບການກຳນົດເງື່ອນໄຂ-ມາດຖານ ພະນັກງານນຳພາ-ຄຸ້ມຄອງ ທີ່ມີລັກສະນະລະອຽດນັ້ນ ເພື່ອສ້າງຄວາມເປັນເອກະພາບ ແລະ ສະດວກໃນແງ່ການຈັດຕັ້ງປະຕິບັດ.

ມອບໃຫ້ຄະນະຮັບຜິດຊອບ ກໍ່ຄືບັນດາອະນຸກຳມະການຕ່າງໆ ນຳເອົາຄວາມຄິດເຫັນຂອງບັນດາສະຫາຍສູນກາງ ສືບຕໍ່ຄົ້ນຄວ້າ, ຈັດສຳມະນາ ແລະ ສືບຕໍ່ປັບປຸງໃຫ້ສົມບູນຂຶ້ນຕື່ມ; ສືບຕໍ່ລາຍງານຕໍ່ກົມການເມືອງສູນກາງພັກ ແລະ ຄະນະບໍລິຫານງານສູນກາງພັກ ເປັນປົກກະຕິ ຕາມແຜນທີ່ໄດ້ກຳນົດໄວ້.

**5. ການປັບປຸງລັດຖະທຳມະນູນ ສະບັບປີ 2015**

ກອງປະຊຸມ ໄດ້ຄົ້ນຄວ້າ ແລະ ປະກອບຄຳເຫັນ ໃນຫຼາຍແງ່ມຸມ ທີ່ເປັນພື້ນຖານ ໃຫ້ແກ່ການປັບປຸງລັດຖະທຳມະນູນ ສະບັບປັບປຸງ ໂດຍສະເພາະ:

(1) ແນໃສ່ການປັບປຸງລະບົບອຳນາດແຫ່ງລັດໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ແນໃສ່ສ້າງພື້ນຖານທາງດ້ານກົດໝາຍ ກໍ່ຄື ນິຕິກຳທີ່ຈະວາງອອກໃນຕໍ່ໜ້າ ໃຫ້ຮັບປະກັນແນວທາງການເມືອງ ຂອງພັກ, ການຄຸ້ມຄອງ-ບໍລິຫານລັດ ໃນໄລຍະໃໝ່.

(2) ການປັບປຸງລັດຖະທຳມະນູນ ຄັ້ງນີ້ ຕົ້ນຕໍ ແມ່ນ ສຸມໃສ່ປັບປຸງບາງໝວດ, ບາງມາດຕາ ເພື່ອຮັບປະກັນ ຫຼື ຮອງຮັບແນວທາງການເມືອງຂອງພັກ ແລະ ແນວທາງການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານລັດ ໃນໄລຍະໃໝ່ ກໍ່ຄືແນວທາງປ່ຽນແປງໃໝ່ ໃນຊຸມປີຕໍ່ໜ້າ, ໂດຍສະເພາະ ໃນສະໄໝທີ XII ຂອງພັກ ທາກບໍ່ແມ່ນການປັບປຸງທັງໝົດເນື້ອໃນ ຂອງລັດຖະທຳມະນູນ. ໝາຍວ່າ ອັນໃດທີ່ເຂົ້າໃຈເປັນເອກະພາບ, ປະຕິບັດມີປະສິດທິຜົນ, ບໍ່ມີຄວາມສັບສົນ ຫຼື ເປັນບັນຫາຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດ ກໍ່ບໍ່ຈຳເປັນຕ້ອງປັບປຸງຕື່ມອີກ.

(3) ການປັບປຸງລັດຖະທຳມະນູນ ຕ້ອງມີເນື້ອໃນສອດຄ່ອງ ກັບບັນດາເນື້ອໃນຂອງໂຄງການການເມືອງຂອງພັກ ສະບັບທີ 3, ຮ່າງລາຍງານການເມືອງ ທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ສະໄໝທີ XII ຂອງພັກ, ມະຕິ 05/ຄບສພ, ມະຕິ 04/ກມສພ ແລະ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 173/ຄລສພ ໂດຍສະເພາະບັນຫາບົດບາດພັກເປັນແກນນຳ, ບັນຫາຈຸດໝາຍສັງຄົມນິຍົມ, ບັນຫາເສດຖະກິດເອກະລາດເປັນເຈົ້າຕົນເອງ, ບັນຫາການແບ່ງຂັ້ນຄຸ້ມຄອງ, ການກຳນົດຊື່ເອີ້ນຕ່າງໆ ຕ້ອງປັບປຸງໄປລວງດຽວກັນ.

**6. ການພັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຜົນການເຄື່ອນໄຫວວຽກງານຕ່າງປະເທດ ຈຳນວນໜຶ່ງ**

ກອງປະຊຸມ ໄດ້ໃຫ້ທິດຊີ້ນຳ ໃນການເພີ່ມທະວີການນຳພາຊີ້ນຳ ຂອງຄະນະພັກແຕ່ລະຂັ້ນ ຕໍ່ການຈັດຕັ້ງພັນຂະຫຍາຍຜົນການເຄື່ອນໄຫວວຽກງານຕ່າງປະເທດ ຂອງການນຳພັກ-ລັດ ດັ່ງນີ້:

(1) ທຸກຂະແໜງການ-ອົງການກ່ຽວຂ້ອງ ຕ້ອງພ້ອມກັນເອົາໃຈໃສ່ ສ້າງການຫັນປ່ຽນໃໝ່ ໃນການຈັດຕັ້ງພັນຂະຫຍາຍຜົນການເຄື່ອນໄຫວວຽກງານການຕ່າງປະເທດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບ ແລະ ປະສິດທິຜົນສູງ.

- ບັນດາສະຫາຍກຳມະການສູນກາງ ຕ້ອງເປັນເຈົ້າການ ນຳພາພັນຂະຫຍາຍ ແລະ ຊີ້ນຳການຈັດຕັ້ງປະຕິບັດ ໃນຂອບເຂດຕົນຮັບຜິດຊອບ ຢ່າງເອົາການເອົາງານ ແລະ ໃຫ້ມີຜົນສຳເລັດຕົວຈິງ, ເຫັນປະຈັກຕາ, ບໍ່ຮັດ ຫຼື ເວົ້າແບບລວມໆ.

- ຕ້ອງອີງໃສ່ຈິດໃຈຂອງ ມະຕິ **“ສອຈ”** ເພື່ອເພີ່ມຄວາມເປັນເຈົ້າການ ແລະ ຍືນໃນທ່າບຸກ, ບໍ່ເອື່ອຍອີງ, ບໍ່ຄອງຄອຍແຕ່ຄຳສັ່ງ.

(2) ອີງໃສ່ທິດພັນລະຫຍາຍລວມ, ມອບໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນນຳໄປສ້າງແຜນປະຕິບັດງານລະອຽດຂອງຕົນ, ມີການແຕ່ງຕັ້ງ, ມອບໝາຍ ໃຫ້ໜ່ວຍງານ ຫຼື ບຸກຄົນຮັບຜິດຊອບ, ກຳນົດເວລາເລີ່ມຕົ້ນ ເວລາສຳເລັດ ຢ່າງຈະແຈ້ງ.

(3) ເອົາໃຈໃສ່ປັບປຸງກົນໄກປະສານງານ, ກົນໄກຊີ້ນຳ, ຕິດຕາມກວດກາ ປະຕິບັດຕາມທິດຊີ້ນຳຂອງກົມການເມືອງ ແຕ່ລະຄັ້ງ ຢ່າງເຂັ້ມງວດ.

(4) ມອບໃຫ້ລັດຖະບານ ຊີ້ນຳບັນຊາເນື້ອໃນແຕ່ລະດ້ານ ໃຫ້ຮັດກຸມ, ລະອຽດຈະແຈ້ງ ໂດຍສະເພາະ ບັນດາໂຄງການໃຫຍ່ໆ ໃຫ້ເຂົ້າສູ່ການຈັດຕັ້ງປະຕິບັດໂດຍໄວ; ບັນຫາທີ່ພົວພັນກັບຫຼາຍກະຊວງ, ຫຼາຍຂະແໜງການ-ທ້ອງຖິ່ນ ຕ້ອງຮີບຮ້ອນແຕ່ງຕັ້ງຄະນະຮັບຜິດຊອບສະເພາະ; ໃຫ້ສະຫຼຸບລາຍງານຄວາມຄືບໜ້າ ໃຫ້ກົມການເມືອງສູນກາງພັກ ເປັນປົກກະຕິ.

ກະຊວງການຕ່າງປະເທດ, ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ບັນດາຄະນະກຳ ມະການຮ່ວມມືກັບຕ່າງປະເທດ ຕ້ອງເຮັດໜ້າທີ່ເປັນໃຈກາງປະສານງານ, ຕິດຕາມ, ຊຸກຍູ້ການຈັດຕັ້ງພັນລະຫຍາຍ ແລະ ສະຫຼຸບລາຍງານ ໃຫ້ຂັ້ນເທິງເປັນປົກກະຕິ.

**7. ກອງປະຊຸມ ໄດ້ວາງຈຸດສຸມນຳພາຊີ້ນຳ ໂດຍມອບໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຊີ້ນຳລັດຖະບານ, ອົງການ ຂອງພັກ ແລະ ລັດ, ຄະນະພັກແຕ່ລະຂັ້ນ ຈັດຕັ້ງປະຕິບັດວຽກງານຈຸດສຸມ ແຕ່ນີ້ ຮອດກອງປະຊຸມຄົບຄະນະ ຄັ້ງທີ 10 ດັ່ງນີ້:**

(1) ຈັດຕັ້ງພັນລະຫຍາຍ ມະຕິກອງປະຊຸມສູນກາງຄັ້ງນີ້ ເຂົ້າສູ່ພາກປະຕິບັດຕົວຈິງ ແລະ ລາຍງານຄວາມຄືບໜ້າຜົນການຈັດຕັ້ງປະຕິບັດ ໃນແຕ່ລະດ້ານ ໃຫ້ກົມການເມືອງສູນກາງພັກ ເປັນປົກກະຕິ.

(2) ສືບຕໍ່ແກ້ໄຂບັນຫາຄັ່ງຄ້າງຮອບດ້ານເສດຖະກິດ-ການເງິນ ແລະ ບັນຫາສັງຄົມ ໃຫ້ມີການຫັນປ່ຽນດີຂຶ້ນ ຕາມການຊີ້ນຳຂອງກອງປະຊຸມຄັ້ງນີ້.

(3) ສືບຕໍ່ເຊີດຊູສະຕິຮັບຜິດຊອບ, ຊີ້ນຳນຳພາ ກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ດ້ວຍຈິດໃຈສ້າງການຫັນປ່ຽນ ທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານ.

(4) ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍ ການພັດທະນາແຕ່ລະດ້ານ ໃນປີ 2024 ໃຫ້ສຳເລັດຜົນຕາມແຜນ, ກຽມເງື່ອນໄຂອັນຈຳເປັນ ເພື່ອກ້າວສູ່ປີ 2025, ຊຶ່ງເປັນປີມ້ວນທ້າຍ ແຫ່ງການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຢ່າງໝັກແໜ້ນ.

(5) ນຳພາຢ່າງແຂງແຮງ ແລະ ແທດເຖິງ ຕໍ່ການແກ້ໄຂຜົນກະທົບຈາກໄພພິບັດທາງທຳມະຊາດ, ໂດຍສະເພາະພື້ນຖານໂຄງລ່າງ ຖະໜົນຫົນທາງໃຫ້ຮີບຮ້ອນປັບປຸງສ້ອມແປງ ໃຫ້ສາມາດທຽວໄປມາໄດ້ສະດວກ, ສ້ອມແປງຊົນລະປະທານ, ລະບົບຊົນລະກະເສດ ໃຫ້ທັນກັບການຜະລິດລະດູແລ້ງ.

(6) ສືບຕໍ່ປັບປຸງເອກະສານກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ດຳເນີນໄປຕາມແຜນກຳນົດໄວ້ ແລະ ກະກຽມເງື່ອນໄຂອື່ນໆ ໃຫ້ແກ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.

(7) ພັນລະຫຍາຍຜົນສຳເລັດການພົວພັນຮ່ວມມືກັບຕ່າງປະເທດ ກໍຄືບັນດາສົນທິສັນຍາ ແລະ ສັນຍາຕ່າງໆ ແລະ ຈັດຕັ້ງປະຕິບັດໃຫ້ເກີດໝາກຜົນຕົວຈິງ.

(8) ເອົາໃຈໃສ່ກະກຽມຮອບດ້ານ ໃຫ້ແກ່ການສະເຫຼີມສະຫຼອງ 3 ວັນປະຫວັດສາດ ໃນປີ 2025 ໃຫ້ເປັນຂະບວນຟົດຟື້ນ.

ຄະນະບໍລິຫານງານສູນກາງພັກ ຮຽກຮ້ອງມາຍັງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ທົ່ວປວງຊົນ ຈົ່ງພ້ອມກັນເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ຍົກສູງຄວາມຮັບຜິດຊອບການເມືອງ, ເດັດດ່ຽວຖືເອົາການແກ້ໄຂບັນຫາຄວາມຫຍຸ້ງຍາກ ຂອງຊາດເປັນບັນຫາສຳຄັນ, ພ້ອມກັນເຊີດຊູນ້ຳໃຈຮັກຊາດ, ເປັນເຈົ້າຕົນເອງ ເພື່ອບຸກບືນສູ້ຊົນແກ້ໄຂ ແລະ ຜ່ານຜ່າອຸປະສັກຕ່າງໆ, ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃຫ້ປະກົດຜົນເປັນຈິງ.

ນະຄອນຫຼວງວຽງຈັນ, ວັນທີ 08 ພະຈິກ 2024

ຕ. ຄະນະບໍລິຫານງານສູນກາງພັກ

ເລຂາທິການໃຫຍ່

ພັກປະຊາຊົນປະຕິວັດລາວ ★ ຄະນະບໍລິຫານງານສູນກາງພັກ

ທອງລຸນ ສີສຸລິດ